# ທັດສະນະຄະຕິຂອງນັກສຶກສາມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາ ຊັ້ນສູງ

*ແສງສຸລິຍາ ຈັນທະນະຄອນ[1], ສອນເພັດ ສີສຸລາດ[2], ແກ້ວອຸດອນ ອິນທະວົງສີ[3], ບົວສອນ ດວງທອງຄຳ[4], ສຸດໃຈ ແກ້ວພາວົງ[5] ມະໂນລົມ ດາລາສຸກ[6]*

*ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ*
*ມະຫາວິທະຍາໄລ ຈຳປາສັກ*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງ: ເພື່ອສຶກສາທັດສະນະຄະຕິ ຂອງນັກສຶກສາມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງ; ແລະ ເພື່ອປຽບທຽບຄວາມຄິດເຫັນຂອງນັກສຶກສາມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງຈຳແນກຕາມຄະນະວິຊາ. ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາໄດ້ແກ່ ນັກສຶກສາຂອງມະຫາວິທະຍາໄລ ຈຳປາສັກ ເຊິ່ງ ແມ່ນນັກສຶກສາປີທີ່ 4 ໃນ 6 ຄະນະວິຊາ ທີ່ລົງທະບຽນຮຽນສົກຮຽນ 2024-2025 ຈຳນວນທັງໝົດ 679 ຄົນ, ເຄື່ອງມືທີ່ໃຊ້ມີຄື: ແບບສອບຖາມ, ສະຖິຕິໃນການວິເຄາະຂໍ້ມູນໄດ້ແກ່: ສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານ ແລະ ປຽບທຽບຄ່າສະເລ່ຍ F-test. ຜົນການຄົ້ນຄວ້າພົບວ່າ: ທັດສະນະຄະຕິຂອງນັກນສຶກສາມະຫາວິທະຍາຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງ ໂດຍລວມພົບວ່າ: ຢູ່ໃນລະດັບຫຼາຍ ($\mu = 4.12$ ; $\sigma = 0.24$).

- ໂອກາດ ແລະ ການພັດທະນາຕົນເອງ ພົບວ່າ: ໂອກາດ ແລະ ການພັດທະນາຕົນເອງໂດຍລວມຢູ່ໃນລະດັບຫຼາຍ ($\mu = 4.90$ ; $\sigma = 0.33$).
- ຄວາມກັງວົນໃນຄ່າໃຊ້ຈ່າຍ ພົບວ່າ: ຄວາມກັງວົນໃນຄ່າໃຊ້ຈ່າຍ ໂດຍລວມຢູ່ໃນລະດັບຫຼາຍທີ່ສຸດ ($\mu = 4,89$ ; $\sigma = 10$).
- ຄຸນນະພາບການສຶກສາ ພົບວ່າ ຄຸນນະພາບການສຶກສາ ຢູ່ໃນລະດັບປານກາງ ($\mu =2.65$; $\sigma = 0.35$).
- ຄວາມຕ້ອງການຕະຫຼາດແຮງງານ ພົບວ່າ ຄວາມຕ້ອງການຕະຫຼາດແຮງງານ ໂດຍລວມຢູ່ໃນລະດັບຫຼາຍ ($\mu = 4.46$; $\sigma = 0.39$).
- ປຽບທຽບຄວາມຄິດເຫັນຂອງນັກສຶກສາມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງຈຳແນກຕາມຄະນະວິຊາ ເຫັນວ່າແມ່ນບໍ່ມີຄວາມແຕກຕ່າງກັນ.

**ຄຳສັບສຳຄັນ:** ທັດສະນະຄະຕິ, ນັກສຶກສາ, ການສຶກສາຊັ້ນສູງ

---

[1] *ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລ ຈຳປາສັກ*
[2] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*
[3] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*
[4] *ຫ້ອງການວິຊາການມະຫາວິທະຍາໄລ ຈຳປາສັກ*
[5] *ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລ ຈຳປາສັກ*
[6] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ*

# The Attitudes of CHAMPASACK university Students Toward the Future of Higher Education

*Sengsouliya CHANTHANAKHONE[1], Sonpheth SYSOULATH[2], Keooudone INTAVONGSY[3], Bouasone DUANGTHONGKHAM[4], Soudchai KEOPHAVONG[5]*

*Office of Scientific Research and Academic Services*

**Abstract**

The objectives of this study were: To investigate the perceptions of higher education students at Champasak University regarding their future educational prospects and to compare the perceptions of higher education students at Champasak University regarding their future educational prospects across different faculties. The participants in this study comprised fourth-year students from six faculties at Champasak University enrolled in the 2024–2025 academic year, totaling 679 students. The research instruments included questionnaires and statistical analyses of the collected data. The analyses encompassed percentages, means, standard deviations, and F-tests for mean comparisons.

The findings revealed the following:

- **Students' Attitudes toward Their Future Education:** The overall level of students' attitudes toward their future education was high (μ = 4.12, σ = 0.24).
- **Opportunities and Self-Development:** Students' perceptions of opportunities and self-development were at a high level (μ = 4.90, σ = 0.33).
- **Financial Concerns:** Students' concerns regarding expenses were at the highest level (μ = 4.89, σ = 10).
- **Quality of Education:** The perceived quality of education was at a moderate level (μ = 2.65, σ = 0.35).
- **Labor Market Demand:** Students' perceptions of labor market demand were at a high level (μ = 4.46, σ = 0.39).
- **Comparison by Faculty:** A comparison of students' perceptions across different faculties revealed no statistically significant differences regarding their future educational prospects.

**Keywords*:*** Attitudes , Students, Higher Education.

[1] *Scientific and Academic Service Office, Champasack University, Email:ctnksengsouliya@gmail.com*

[2] *Faculty of Education, Champasack University Email: sonphethssl@gmail.com.*

[3] *Faculty of Education, Champasack University*

[4] *Scientific and Academic Service Office, Champasack University, Email:ctnksengsouliya@gmail.com*

[5] *Scientific and Academic Service Office, Champasack University*

**1. ພາກສະເໜີ**

ສະຖາບັນການສຶກສາແມ່ນພື້ນຖານສຳຄັນໃນການພັດທະນາຄົນເຂົ້າໄປໃນກຳລັງແຮງງານ. "ການພັດທະນາທຶນມະນຸດ" ຕ້ອງມີຄວາມຮອບຄອບໃນທຸກດ້ານ ເພື່ອບັນລຸສັງຄົມປັນຍາທີ່ນຳໄປສູ່ສັງຄົມທີ່ມີຄວາມສຸກ (Thairath Money, 2022) ສິ່ງທ້າທາຍສຳລັບສະຖາບັນການສຶກສາຊັ້ນສູງແມ່ນການສ້າງການສຶກສາທີ່ມີຄຸນນະພາບທີ່ສາມາດຮັບມືກັບຄວາມແຕກຕ່າງ ແລະ ຄວາມຫຼາກຫຼາຍທາງດ້ານວັດທະນະທຳ, ການຜະລິດພົນລະເມືອງທີ່ເຂັ້ມແຂງ ຊ່ວຍແກ້ໄຂວິກິດການຂັດແຍ້ງ ແລະ ພັດທະນາປະເທດທີ່ຕອບສະໜອງຄວາມຕ້ອງການຂອງປະຊາຊົນ (Browers & Ho, 2021).

ການພັດທະນາການສຶກສາຕ້ອງເອົາໃຈໃສ່ ຄວາມຄິດສ້າງສັນ, ການຄິດວິເຄາະ, ວິຈານ ແລະ ສ້າງການແຂ່ງຂັນໃນການຮຽນ ໂດຍອີງໃສ່ຄວາມແຕກຕ່າງຂອງທ້ອງຖິ່ນ (Kitamura, Liu & Hong, 2022) ແມ່ນຕົວຊີ້ວັດຂອງຄວາມພ້ອມຂອງການສຶກສາ ທີ່ຈະສົ່ງຜົນໃຫ້ຜູ້ຮຽນມີຄວາມເຂັ້ມແຂງໃນການຮຽນຮູ້ ແລະ ຊຸກຍູ້ໃຫ້ຜູ້ຮຽນມີສ່ວນຮ່ວມໃນກິດຈະກຳຢ່າງສ້າງສັນ, ສາມາດປັບຕົວເຂົ້າກັບການປ່ຽນແປງຕ່າງໆໃນຊີວິດ ແລະ ຄຸນນະພາບຂອງການຮຽນຮູ້. ສະນັ້ນ, ມັນມີຄວາມສຳຄັນ ແລະ ຈຳເປັນທີ່ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງຕ້ອງຈັດລຳດັບຄວາມສຳຄັນໃນການອອກແບບລະບົບການຮຽນການສອນ, ກິດຈະກຳນອກຫຼັກສູດ ແລະ ການຈັດສະພາບແວດລ້ອມ, ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຜະລິດນັກສຶກສາທີ່ຈົບການສຶກສາໃຫ້ມີຄວາມພ້ອມດ້ານຄວາມຮູ້, ຄວາມສາມາດ ແລະ ຊີວິດທີ່ມີຄວາມສຸກ (Tongsawang & Kangkarn, 2021)

ສະຖາບັນການສຶກສາຊັ້ນສູງ ເປັນເຄື່ອງມືພັດທະນາຄົນໃຫ້ມີຄວາມຮູ້, ຄວາມສາມາດ ແລະ ຄຸນສົມບັດສົມທຳທີ່ຈຳເປັນ ດັ່ງນັ້ນ, ການຕັດສິນໃຈທີ່ຈະດຳເນີນໂຄງການການສຶກສາຊັ້ນສູງແມ່ນສຳຄັນ ມັນເປັນຈຸດເລີ່ມຕົ້ນທີ່ສຳຄັນສຳລັບການເລືອກອາຊີບໃນອະນາຄົດທີ່ສອດຄ່ອງກັບຄວາມຮູ້, ຄວາມສົນໃຈ ແລະ ຄວາມເໝາະສົມສ່ວນບຸກຄົນ ນີ້ຈະປະກອບສ່ວນເຂົ້າໃນການຮຽນຮູ້ທີ່ມີປະສິດທິພາບ ແລະ ການຄັດເລືອກວຽກທີ່ເໝາະສົມ, ອາຊີບ, ແລະ ຕຳແໜ່ງ, ເຊັ່ນດຽວກັນກັບການຍອມຮັບຈາກຄົນອ້ອມຂ້າງ ດັ່ງນັ້ນ, ການສົ່ງເສີມມະຫາວິທະຍາໄລໃຫ້ເປັນສະຖານທີ່ແຫ່ງຄວາມສຸກທີ່ສອດຄ່ອງກັບຄວາມມັກຂອງນັກຮຽນ (Tianngoen, Amnuaypornlert, & Shiangjen, 2022) ເປັນສິ່ງທ້າທາຍສຳລັບມະຫາວິທະຍາໄລໃນການພັດທະນາຍຸດທະສາດ ເພື່ອດຶງດູດຄວາມສົນໃຈຂອງນັກສຶກສາ ແລະ ຢືນຢັນສິດໃນການຮຽນຕໍ່ ພ້ອມທັງສ້າງຄວາມພ້ອມຂອງປະຊາຊົນໃນການແຂ່ງຂັນກັບການປ່ຽນແປງທັງລະດັບພາກພື້ນ ແລະ ລະດັບໂລກໃນອະນາຄົດ.

ສິ່ງທ້າທາຍຂອງວຽກງານການສຶກສາຊັ້ນສູງຕ້ອງການຢາກໃຫ້ນັກຮຽນຈົບໃນສາຍ STEM ມີປະລິມານເພີ່ມຂຶ້ນ ແລະ ມີຄຸນນະພາບສູງ, ນັກຮຽນທີ່ຈົບຈາກໂຮງຮຽນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍຕ້ອງມີພື້ນຖານທັກສະທີ່ດີ, ຕ້ອງມີຄູສອນທີ່ມີທັກສະ ແລະ ມີແຫລ່ງຮຽນຮູ້ທີ່ເໝາະສົມ, ຄຸນນະພາບ, ຄວາມສາມາດແລະ ຄວາມຮູ້ຂອງພະນັກງານໃນສະຖານການສຶກສາຊັ້ນສູງທີ່ຍັງມີຂີດຈຳກັດກໍ່ແມ່ນສິ່ງທ້າທາຍອັນໜຶ່ງ ການພັດທະນາລະບົບການປະກັນຄຸນນະພາບໃນລະດັບແຜນງານ ແລະ ລະດັບສະຖາບັນແມ່ນສິ່ງທ້າທາຍເຖິງຢ່າງໃດກໍ່ຕາມມັນແມ່ນອົງປະກອບທີ່ຈຳເປັນສຳລັບຂະແໜງການຍ່ອຍນີ້ ເພື່ອກາຍເປັນສະມາຊິກທີ່ສາມາດແຂ່ງຂັນກັບເຄືອຂ່າຍມະຫາວິທະຍາໄລພາກພື້ນອາຊຽນ ແລະ ເປີດໂອກາດໃຫ້ແກ່ການແລກປ່ຽນນັກສຶກສາ ນອກນີ້ວຽກ

ງານກິດຈະກຳນັກສຶກສາກໍ່ຍັງມີຂໍ້ຄົງຄ້າງທີ່ຈະຕ້ອງໄດ້ຮັບການແກ້ໄຂເຊັ່ນ: ການຄຸ້ມຄອງທຶນການສຶກສາ ສຳລັບພະນັກງານ-ນັກສຶກສາໄປຮຽນຕ່າງປະເທດຍັງບໍ່ທັນລວມສູນ, ການສ້າງຊັບພະຍາກອນມະນຸດຢູ່ຕ່າງປະເທດຢູ່ບາງຂົງເຂດວິຊາສະເພາະ ບໍ່ທັນສອດຄ່ອງກັບແຜນການພັດທະນາເສດຖະກິດສັງຄົມຂອງຊາດແຕ່ລະໄລຍະ(ແຜນພັດທະນາຂະແໜງການສຶກສາແລະກິລາ 5 ປີ ຄັ້ງທີ IX 2021-2025).

ມະຫາວິທະຍາໄລ ຈຳປາສັກ ໄດ້ຮັບເອົານັກສຶກສາເຂົ້າຮຽນຕາມແຜນທີ່ ກະຊວງສຶກສາທິການ ແລະ ກິລາ ວາງອອກຄື: ຮັບເຂົ້າຕາມແຜນແບ່ງປັນຂອງກະຊວງສຶກສາທິການ ແລະ ກິລາ ແລະ ຮັບເຂົ້າຕາມຜົນການສອບເສັງຄັດເລືອກ ທີ່ມະຫາວິທະຍາໄລ ຈຳປາສັກ ຈັດຂຶ້ນ.

ໄດ້ຈັດຕັ້ງການຮຽນ-ການສອນ ໃນ 3 ລະດັບຄື: ລະດັບອະນຸປະລິນຍາ, ລະດັບປະລິນ ຍາຕີ ແລະ ປະລິນຍາໂທ. ເລີ້ມປີ 2002 ເປີດສອນພຽງ 3 ຄະນະວິຊາ ປະກອບມີ 7 ສາຂາວິຊາ, ມາຮອດປັດຈຸບັນ ໄດ້ປັບປຸງ ແລະ ຂະຫຍາຍຫຼັກສູດຕາມມາດຕາຖານຫຼັກສູດແຫ່ງຊາດ ແລະ ຕາມຄວາມຕ້ອງການຂອງສັງຄົມ ໄດ້ເປີດການຮຽນ-ການສອນ ໃນ 6 ຄະນະວິຊາ , ມີ 17 ພາກວິຊາ, ມີ 47 ສາຂາວິຊາ. ໃນນີ້, ລະດັບປະລິນຍາໂທ 5 ສາຂາວິຊາ, ປະລິນຍາຕີ (ປົກກະຕິ) 29 ສາຂາວິຊາ, ປະລິນຍາຕີຕໍ່ເນື່ອງ 13 ສາຂາວິຊາ. ຕະຫຼອດໄລຍະ 20 ປີ ໄດ້ກໍ່ສ້າງບຸກຄະລາກອນອອກຮັບໃຊ້ສັງຄົມ ທັງໝົດ 15,621 ຄົນ (ຍິງ 6,857 ຄົນ), ໃນນີ້ລະດັບປະລິນຍາຕີ 12,058 ຄົນ (ຍິງ 5,503 ຄົນ) ແລະ ອະນຸປະລິນຍາ 3,531 ຄົນ (ຍິງ 1,464 ຄົນ). ແຕ່ປັດຈຸບັນການເຂົ້າຮຽນຕໍ່ຂອງນັກຮຽນ ມະຫາວິທຍາໄລ ຈຳປາສັກ ມີທ່າອຽງຫຼຸດລົງຢ່າງໜ້າຕົກໃຈ.

ດັ່ງນັ້ນ, ພວກຂ້າພະເຈົ້າຈຶ່ງມີຄວາມສົນໃຈຢາກສຶກສາ ທັດສະນະຄະຕິຂອງນັກສຶກສາ ມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງ.

**2. ຈຸດປະສົງຂອງການຄົ້ນຄ້ວາ**

1. ເພື່ອສຶກສາທັດສະນະຄະຕິ ຂອງນັກສຶກສາ ມະຫາ ວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງ.
2. ເພື່ອປຽບທຽບຄວາມຄິດເຫັນຂອງນັກສຶກສາ ມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງຈຳແນກຕາມຄະນະວິຊາ.

➢ ຜົນປະໂຫຍດທີ່ໄດ້ຮັບ

1.ຜົນການວິໄຈຈະຊ່ວຍໃຫ້ຜູ້ບໍລິຫານ ແລະ ຜູ້ວາງນະໂຍບາຍການສຶກສາ ຮັບຮູ້, ແລະ ເຂົ້າໃຈທັດສະນະຄະຕິ ແລະ ຄວາມຄາດຫວັງຂອງນັກສຶກສາຕໍ່ການສຶກສາຊັ້ນສູງ.

2. ເປັນພື້ນຖານໃນການປັບປຸງຫຼັກສູດ ແລະ ການບໍລິຫານການສຶກສາໃຫ້ສອດຄ່ອງກັບຄວາມຄາດຫວັງຂອງນັກສຶກສາ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານ.

3. ຈະໄດ້ຮັບຮູ້ວ່ານັກສຶກສາແຕ່ລະຄະນະມີຄວາມຄິດເຫັນຕໍ່ອະນາຄົດຂອງການສຶກສາແຕກຕ່າງກັນ ຫຼື ບໍ່ ເຊິ່ງຈະຊ່ວຍໃຫ້ສາມາດອອກແບບມາດຕະການສົ່ງເສີມການຮຽນຮູ້ໃຫ້ເໝາະສົມກັບແຕ່ລະຄະນະ.

**3. ບົດຄົ້ນຄວ້າທີ່ກ່ຽວຂ້ອງ**

Phommasack ແລະ Kittisak (2022) ສຶກສາກ່ຽວກັບທັດສະນະຄະຕິຂອງນັກສຶກສາຕໍ່ການສຶກສາຊັ້ນສູງ ຈຸດປະສົງ ໃນການສຶກສາ ແມ່ນເພື່ອສຳຫຼວດລະດັບຄວາມຄາດຫວັງອາຊີບຂອງນັກສຶກສາໃນການສຶກສາຊັ້ນສູງ ແລະການປຽບທຽບຄວາມຄາດຫວັງຕາມອາຊີບ, ຕາມເພດ, ສະຖານທີ່ ແລະ ສາຂາວິຊາການສຶກສາຄັ້ງນີ້ ດ້ວຍການສຳຫຼວດ ດ້ວຍວິທີລະອຽດ (Descriptive Survey Method), ກຸ່ມຕົວທີ່ໃຊ້ໃນການສຶກສາ ແມ່ນ ນັກສຶກສາຈາກມະຫາວິທະຍາໄລ ໂດຍໃຊ້ເຄື່ອງມືແບບຄວາມຄາດຫວັງອາຊີບ (Career Aspiration Scale) ທີ່ພັດທະນາໂດຍ Arifa Sultana (2015), ສະຖິຕິທີ່ໃຊ້ໃນການສຶກສາໄດ້ແກ່ ສະຖິຕິພື້ນຖານ (Descriptive Statistics) ແລະ

ສະຖິຕິ ທົດສອບ (t-test), ຜົນການສຶກສາ ພົບວ່າ ລະດັບຄວາມຄາດຫວັງອາຊີບ ແມ່ນຢູ່ໃນລະດັບປານກາງ (Moderate) ຈໍານວນ 56.7%, ລະດັບສູງ 21.3% ແລະ ລະດັບຕໍ່າ 22%, ການປຽບທຽບຄວາມຄາດຫວັງອາຊີບ: ເພດ: ເພດແຕກຕ່າງກັນ ມີຄວາມຄາດຫວັງບໍ່ແຕກຕ່າງ (t-value = 0.463, p-value = 0.644), ສະຖານທີ: ສະຖານທີ່ແຕກຕ່າງກັນ ມີຄວາມຄາດຫວັງບໍ່ແຕກຕ່າງກັນ (t-value = 1.974, p-value = 0.050), ສາຂາວິຊາ: ສາຂາຮຽນແຕກຕ່າງກັນ ມີຄວາມຄາດຫວັງບໍ່ແຕກຕ່າງກັນ (t-value = 0.850, p-value = 0.397).

Nguyen, K. M. (2023). ທັດສະນະຄະຕິອາຊີບຂອງນັກສຶກສາວິທະຍາໄລ MilleniGenZສຶກສາທັດສະນະຄະຕິອາຊີບຂອງນັກສຶກສາວິທະຍາໄລ Latinx ແລະ Asian American Millennial ແລະ Gen Z ໂດຍມີຈຸດປະສົງ ເພື່ອສຶກສາຄວາມເຂົ້າໃຈກ່ຽວກັບປະສົບການໃນວິທະຍາໄລທີ່ເປັນເອກະລັກ, ມີລັກສະນະຄອບຄົວ, ວັດທະນະທໍາ ແລະສ່ວນບຸກຄົນ ແລະເພື່ອສຶກສາຄວາມປາດຖະໜາຫຼັງຈາກທີ່ຮຽນຈົບມະຫາວິທະຍາໄລ ຈະເປັນຄືແນວໃດໂດຍສະເພາະອິດທິພົນທາງດ້ານວັດທະນະທໍາສັງຄົມມີຜົນກະທົບແນວໃດຕໍ່ຄວາມສົນໃຈ ແລະການບັນລຸບົດບາດຂອງຜູ້ນໍາ MilleniGenZ ໃນອາຊີບໃນອະນາຄົດຂອງພວກເຂົາ. ໂດຍການສຶກສາແບບສໍາຫຼວດສອງຊຸດຂອງການສໍາຫຼວດໄດ້ຖືກປະຕິບັດ. ໂດຍໃຊ້ແບບຄໍາຖາມ 184 ຄໍາຖາມ ກັບນັກສຶກສາວິທະຍາໄລໃນພາກໃຕ້ຂອງຄາລີຟໍເນຍໃນປີ 2017 (N=936) ແລະໃນປີ 2020 ໄດ້ໃຊ້ແບບສອບຖາມ 211 ຄໍາຖາມ ໃນຈໍານວນປະຊາກອນ (N=742). ການສຶກສາພົບວ່າ ຄວາມສໍາຄັນຂອງການສະໜອງຊັບພະຍາກອນການເຮັດວຽກທີ່ດີກວ່າ (ເຊັ່ນ: ກອງປະຊຸມ, ການໃຫ້ຄໍາປຶກສາ, ໂອກາດໃນເຄືອຂ່າຍ) ສໍາລັບ MilleniGenZ ໃນລະຫວ່າງວິທະຍາໄລ ເຊິ່ງຈະຊ່ວຍໃຫ້ການຫັນປ່ຽນໄປສູ່ກໍາລັງແຮງງານ ແລະບົດບາດຜູ້ນໍາທີ່ມີທ່າແຮງ. ປັດໄຈວັດທະນະທໍາສັງຄົມມີອິດທິພົນຕໍ່ທັດສະນະຄະຕິອາຊີບຂອງນັກສຶກສາ Latinx ແລະ Asian American College. ຈາກການສຶກສາພົບວ່າ ສະຖາບັນ ແລະອີງການຈັດຕັ້ງຄວນລວມເອົາການພິຈາລະນາຄວາມຫຼາກຫຼາຍ ແລະລວມເຂົ້າໃນຂະບວນການວາງແຜນອາຊີບ ເພື່ອສະໜັບສະໜູນບຸກຄົນໃນການເອົາຊະນະອຸປະສັກຂອງລະບົບ.

Arhin, V. (2018). ຄວາມສໍາພັນລະຫວ່າງຄວາມມຸ່ງຫວັງໃນອາຊີບ ແລະການສຶກສາພຶດຕິກໍາຂອງຜູ້ຮຽນທາງໄກປີທີສອງຂອງ ມະຫາວິທະຍາໄລ Cape Coast, ການາ. ຈຸດປະສົງຂອງການສຶກສາແມ່ນ ເພື່ອກວດສອບຄວາມສໍາພັນລະຫວ່າງຄວາມປາຖະໜາໃນການເຮັດວຽກ ແລະພຶດຕິກໍາການສຶກສາ ໃນບັນດານັກຮຽນທາງໄກຂອງມະຫາວິທະຍາໄລ Cape Coast (Ghana) ການອອກແບບການຄົ້ນຄວ້າຄວາມສໍາພັນທີ່ນໍາໃຊ້ວິທີການອະທິບາຍແບບປະສົມຕາມລໍາດັບ ໂດຍໄດ້ນໍາເອົານັກສຶກສາ 368 ຄົນ ແລະມີການຄັດເລືອກຢ່າງຕັ້ງໃຈ, ໃນນັ້ນ 357 ໄດ້ຖືກນໍາໃຊ້ເຂົ້າໃນການວິເຄາະ. ທິດສະດີການອາຊີບມັນສະໜອງສັງຄົມ postulated ໂດຍ Lent et al. (1994) ສ້າງກອບທິດສະດີຂອງການສຶກສາ. ການວິເຄາະຂໍ້ມູນ ໂດຍໃຊ້ສະຖິຕິພັນລະນາ ແລະສໍາປະສິດການພົວພັນ tetrachoric ເຊັ່ນດຽວກັນກັບຂະບວນການ Merriam ຂອງການວິເຄາະການເຂົ້າລະຫັດ. ຜົນຂອງການວິເຄາະດ້ານປະລິມານສະແດງໃຫ້ເຫັນວ່າຜູ້ເຂົ້າຮ່ວມສ່ວນໃຫຍ່ມີອາຊີບໃນທາງບວກຄວາມມຸ່ງມາດປາດຖະໜາເຊັ່ນດຽວກັນກັບພຶດຕິກໍາການສຶກສາທີ່ດີ. ຢ່າງໃດກໍ່ຕາມ, ຄ່າສໍາປະສິດທີ່ກ່ຽວຂ້ອງແມ່ນ r(355) = .273, p =.01 ເຊິ່ງຫມາຍຄວາມວ່າຄວາມກ່ຽວຂ້ອງກັນລະຫວ່າງສອງຕົວແປແມ່ນມີຄວາມສໍາຄັນທາງສະຖິຕິ. ການສຶກສາພົບວ່າ, ໃນຄໍາສັ່ງທີ່ຈະຊ່ວຍເພີ່ມທະວີການ

ປະຕິບັດທາງດ້ານວິຊາການຂອງນັກສຶກສາ, ການຄຸ້ມຄອງຂອງວິທະຍາໄລຂອງການສຶກສາທາງໄກຂອງວິທະຍາໄລ Cape Coast ຄວນຈັດກອງປະຊຸມແນະນໍາອາຊີບແຕ່ລະໄລຍະສໍາລັບນັກສຶກສາ, ເພື່ອກະຕຸ້ນການປູກຈິດສໍານຶກອາຊີບຂອງເຂົາເຈົ້າ ແລະສິ່ງເສີມເຮັດໃຫ້ມີຄວາມກະຕືລືລົ້ນຂອງເຂົາເຈົ້າ.

Brooks, R. (2021). ຄວາມປາຖະໜາຂອງນັກຮຽນຊັ້ນສູງສໍາລັບຊີວິດຫຼັງຈົບການສຶກສາຂອງເຂົາເຈົ້າ: ການສຶກສາປຽບທຽບໃນທົ່ວທົ່ວປະເທດເອີຣົບ. ໄດ້ນໍາໃຊ້ຂໍ້ມູນໃນປີ 2017-18 ຜ່ານການສົນທະນາກຸ່ມຈຸດສຸມກັບນັກຮຽນ 295 ຄົນໃນ 6 ປະເທດເອີຣົບ: ເດນມາກ, ອັງກິດ, ເຢຍລະມັນ, ໄອແລນ, ໂປແລນ ແລະສະເປນ. ປະເທດເຫຼົ່ານີ້ໄດ້ຮັບການຄັດເລືອກເພື່ອສະໜອງຄວາມຫຼາກຫຼາຍກ່ຽວກັບ: ລະບອບສະຫວັດດີການ; ການພົວພັນກັບສະຫະພາບເອີຣົບ; ວິທີການສະໜອງທຶນ ແລະ ຂອບເຂດຂອງການຊ່ວຍເຫຼືອທາງດ້ານການເງິນທີ່ສະໜອງໃຫ້ນັກຮຽນຖືງ.ພົບວ່າ: ຄວາມປາດຖະໜາຂອງນັກຮຽນສໍາລັບຊີວິດຂອງພວກເຂົາຫຼັງຈາກຮຽນຈົບ. ດັ່ງທີ່ພວກເຮົາໄດ້ສະແດງໃຫ້ເຫັນຂ້າງເທິງນີ້, ໂດຍທົ່ວໄປແລ້ວນັກສຶກສາຫວັງວ່າທຶນຂອງາະຫະພາບເອີຣົບ ຈະຊ່ວຍໃຫ້ພວກເຂົາພັດທະນາທາງປັນຍາແລະສ່ວນບຸກຄົນ, ອໍານວຍຄວາມສະດວກໃນການປ່ຽນແປງໄປສູ່ຕະຫຼາດແຮງງານ. ເຫັນວ່າ ເຖິງແມ່ນວ່າຄວາມປາຖະໜາສໍາລັບການຈ້າງງານໄດ້ມີປົກກະຕິ ແຕ່ແຜນການ ແລະຄວາມປາຖະໜາທີ່ບໍ່ແມ່ນເສດຖະກິດກໍ່ມີຄວາມສໍາຄັນ ເຊັ່ນ ການສ້າງຕັ້ງສະຖາບັນ ແລະວິຊາຂອງການສຶກສາ.

Goetsch, D. (2013). ໄດ້ສຶກສາ ທັດສະນະຄະຕິ, ຄວາມເຊື່ອ ແລະແຜນການຂອງນັກຮຽນກ່ຽວກັບການວາງແຜນອາຊີບ ແລະຊີວິດຫຼັງວິທະຍາໄລໂດຍມີຈຸດປະສົງ ກັບການຫັນໄປສູ່ການເປັນຜູ້ໃຫຍ່ ແລະຄວາມສໍາຄັນຂອງອາຊີບ, ຄວາມສາມາດຂອງນັກຮຽນ ເພື່ອບັນລຸເປົ້າໝາຍຂອງເຂົາເຈົ້າກ່ຽວກັບອາຊີບ ການວາງແຜນອາຊີບຫຼັງຈາກຈົບວິທະຍາໄລ; ສຶກສາເຖິງຄວາມສໍາພັນລະຫວ່າງປະສິດທິພາບຕົນເອງ ແລະໄລຍະເວລາຂອງການເລີ່ມຕົ້ນຂອງການວາງແຜນອາຊີບ, ຈາກການສໍາຫຼວດຕົວຢ່າງແບບສຸ່ມຂອງນັກສຶກສາປະລິນຍາຕີຢູ່ທີ່ວິທະຍາໄລຂະໜາດນ້ອຍ, ເອກະຊົນ, Lutheran ໃນ Midwest, ການສຶກສານີ້ໄດ້ສຶກສາເບິ່ງຄວາມສໍາພັນລະຫວ່າງລະດັບຄວາມສາມາດຂອງຕົນເອງຂອງນັກຮຽນ ແລະທັດສະນະຄະຕິຂອງພວກເຂົາກ່ຽວກັບຂະບວນການວາງແຜນອາຊີບ. ພົບວ່ານັກຮຽນຜູ້ທີ່ເລີ່ມຕົ້ນອາຊີບຂະບວນການຄົ້ນຫາກ່ອນໜ້ານີ້ ມີລະດັບປະສິດທິພາບຂອງຕົນເອງສູງຂຶ້ນ ແລະມີທັດສະນະຄະຕິໃນທາງບວກຫຼາຍຂຶ້ນ ຕໍ່ກັບຂະບວນການຊອກຫາອາຊີບ ເມື່ອປຽບທຽບກັບຜູ້ທີ່ເລີ່ມຕົ້ນຂະບວນການຊອກຫາອາຊີບ; ນັກສຶກສາທີ່ເລີ່ມຕົ້ນການວາງແຜນການເຮັດວຽກກ່ອນຫນ້ານັ້ນມີແນວໂນ້ມທີ່ຈະມີທາງບວກຫຼາຍຂຶ້ນໃນດ້ານທັດສະນະຄະຕິ. ນອກຈາກນັ້ນ, ນັກສຶກສາຜູ້ທີ່ຄາດຫວັງທີ່ຈະພັດທະນາວິຊາຊີບມີລະດັບຄວາມສາມາດຂອງຕົນເອງທີ່ສູງຂຶ້ນ ແລະມີທັດສະນະຄະຕິໃນທາງບວກຫຼາຍຂຶ້ນ.

**4. ວິທີດໍາເນີນການຄົ້ນຄວ້າ**

ປະຊາກອນໃນການສຶກສາຄັ້ງນີ້ໄດ້ແກ່: ນັກສຶກສາຂອງມະຫາວິທະຍາໄລ ຈໍາປາສັກ ເຊິ່ງ ແມ່ນນັກສຶກສາປີທີ່ 4 ໃນ 6 ຄະນະວິຊາ ທີ່ລົງທະບຽນຮຽນສົກຮຽນ 2024-2025 ຈໍານວນທັງໝົດ 679 ຄົນ

ກຸ່ມຕົວຢ່າງໄດ້ແກ່:ແມ່ນນັກສຶກສາປີທີ່ 4 ໃນ 6 ຄະນະວິຊາ ທີ່ລົງທະບຽນຮຽນສົກຮຽນ 2024-2025 ຈໍານວນທັງໝົດ 679 ຄົນ ດັ່ງລາຍອຽດລຸ່ມນີ້:

| ລ.ດ | ຄະນະ | ຈໍານວນ |
|---|---|---|
| 1 | ວິທະຍາສາດທໍາມະຊາດ | 7 |
| 2 | ເສດຖະສາດ ແລະພການຄຸ້ມຄອງ | 217 |
| 3 | ກະເສດສາດ ແລະ ປ່າໄມ້ | 225 |
| 4 | ວິສະວະກໍາສາດ | 101 |
| 5 | ນິຕິສາດ | 73 |

| | | |
|---|---|---|
| 6 | ສຶກສາສາດ | 56 |
| | ລວມ | 679 |

ໃນການເລືອກເອົາກຸ່ມຕົວຢ່າງ ແມ່ນໄດ້ເລືອກເອົາທັງໝົດ.

4.1.1 ວິທີເກັບຂໍ້ມູນ

ຂັ້ນຕອນທີ 1 ຜູ້ຄົ້ນຄວ້າຂໍໜັງສືສະເໜີລົງເກັບກຳຂໍ້ມູນຈາກອະທິການບໍດີ ມະຫາວິທະຍາໄລ ຈຳປາສັກ ເພື່ອຂໍອະນຸຍາດລົງເກັບກຳຂໍ້ມູນຈາກນັກສຶກສາແຕ່ລະຄະນະວິຊາຕ່າງໆ

ຂັ້ນຕອນທີ 2 ຜູ້ຄົ້ນຄວ້າລົງໄປພົບພັນກຸ່ມເປົ້າໝາຍພ້ອມທັງນຳແບບສອບຖາມໄປແຈກຢາຍ, ອະທິບາຍ ແລະ ແນະນຳວິທີການຕອບແບບສອບຖາມໃຫ້ນັກສຶກສາ ໃຫ້ເຂົ້າໃຈຢ່າງລະອຽດຈະແຈ້ງດ້ວຍຕົນເອງ ແລະ ໃຫ້ແຕ່ລະທ່ານໄປຕອບຢູ່ບ້ານຕາມອັດທະຍາໄສ.

ຂັ້ນຕອນທີ 3 ຜູ້ຄົ້ນຄວ້າເກັບແບບສອບຖາມທີ່ກຸ່ມເປົ້າໝາຍຕອບແລ້ວນັ້ນຄືນດ້ວຍຕົນເອງໃຫ້ຄົບຕາມຈຳນວນ.

4.1.2 ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການລວບລວມຂໍ້ມູນເປັນແບບສອບຖາມ(Questionnaire) ກ່ຽວກັບທັດສະນະຄະຕິຂອງນັກສຶກສາມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງ ແບ່ງເປັນດັ່ງນີ້:

ຕອນທີ 1 ເປັນແບບສອບຖາມກ່ຽວກັບທັດສະນະຄະຕິຂອງນັກສຶກສາຂອງມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດການສຶກສາຊັ້ນສູງ ກ່ຽວກັບສະຖານະພາບຂອງຜູ້ຕອບແບບສອບຖາມເຊິ່ງມີລັກສະນະແບບ Multiple Choices

ຕອນທີ 2 ເປັນການສອບຖາມ ກ່ຽວກັບທັດສະນະຄະຕິຂອງນັກສຶກສາຂອງມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດການສຶກສາຊັ້ນສູງ ມີລັກສະນະແບບມາດຕາສ່ວນປະມານຄ່າ (Rating scale) 5 ລະດັບ ໃນ 5 ດ້ານ (Likert, 91932)

4.1.3 ການສ້າງ ແລະ ການຫາຄຸນນະພາບຂອງເຄື່ອງມື ຜູ້ຄົ້ນຄວ້າຈະດຳເນີນຕາມຂັ້ນຕອນດັ່ງຕໍ່ໄປນີ້:

1. ສຶກສາຄົ້ນຄວ້າແນວຄິດທິດສະດີຂອງ Salazar-Fernandez, J. P., Muoz-Gama, J., & Sepúlveda, M. (2025), Schulz, J. (2025). Alanazi, A. S. (2023), Conzelmann, J. G., Hemelt, S. W., Hershbein, B. J., Martin, S., Simon, A., & Stange, K. M. (2024), (Phommasack & Kittisak, 2022), (Phouvong & Manivong, 2023), (Soysouvanh & Sipaseuth, 2022), (Chansamone & Chanthavong, 2021) ເພື່ອເປັນບ່ອນອີງໃນການສ້າງເຄື່ອງມື.

2. ການສ້າງແບບສອບຖາມໄປຕາມຈຸດປະສົງກອບແນວຄິດ ແລະນິຍາມສັບທີ່ຕັ້ງໄວ້ເພື່ອເປັນເຄື່ອງມືໃນການລວບລວມຂໍ້ມູນ.

3.ນຳແບບສອບຖາມໄປທົດລອງໃຊ້ກັບນັກສຶກສາຜູ້ທີ່ວິທະຍາໄລຄູປາກເຊ ແຂວງ ຈຳປາສັກ ທີ່ບໍ່ແມ່ນກຸ່ມເປົ້າໝາຍຈຳນວນ 30 ຄົນ, ນຳຂໍ້ມູນທີ່ໄດ້ຈາກການທົດລອງມາຫາຄ່າຄວາມເຊື່ອໝັ້ນຂອງແບບສອບຖາມໂດຍການຫາຄ່າສຳປະສິດ(alpha coefficient)ຕາມວິທີຂອງ Cronbach ໄດ້ຄ່າຄວາມເຊື່ອໝັ້ນຂອງແບບສອບຖາມທີ່ນຳໄປທົດສອບເທົ່າກັບ 0.92.

4.1.4 ການວິເຄາະຂໍ້ມູນ

ວິເຄາະຂໍ້ມູນຕາມລັກສະນະຂອງຂໍ້ມູນໂດຍການນຳໃຊ້ໂປຣແກຣມສຳເລັດຮູບລາຍລະອຽດດັ່ງຕໍ່ໄປນີ້:

ຂັ້ນຕອນທີ 1 ເປັນການວິເຄາະຂໍ້ມູນຈາກແບບສອບຖາມກ່ຽວກັບສະຖານະພາບຂອງຜູ້ຕອບແບບສອບຖາມໂດຍຫາຄ່າຄວາມຖີ່ (Frequency) ແລະຄ່າສ່ວນຮ້ອຍ(Percentage).

ຂັ້ນຕອນທີ 2 ເປັນການວິເຄາະຂໍ້ມູນຈາກແບບສອບຖາມກ່ຽວກັບທັດສະນະຄະຕິຂອງນັກສຶກສາ

ມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດການສຶກສາຊັ້ນສູງ 4 ດ້ານຄື:

1) ໂອກາດ ແລະການພັດທະນາຕົນເອງ

2) ຄວາມກັງວົນໃນຄ່າໃຊ້ຈ່າຍ

3) ຄຸນນະພາບການສຶກສາ

4) ຄວາມຕ້ອງການຕະຫຼາດແຮງງານ

ໂດຍການຫາຄ່າສະເລ່ຍ(mean) ແລະ ຄ່າຜັນປ່ຽນມາດຖານ (S.D) ຕາມວິທີຂອງພິຈິດ ລິດຈະເລີນ (2014) ໂດຍມີເກນປະເມີນດັ່ງຕໍ່ໄປນີ້:

- ຄ່າສະເລ່ຍ 4.51–5.00 ໝາຍເຖິງມີທັດສະນະຄະຕິໃນລະດັບຫຼາຍທີ່ສຸດ
- ຄ່າສະເລ່ຍ3.51–4.50 ໝາຍເຖິງມີທັດສະນະຄະຕິໃນລະດັບຫຼາຍ
- ຄ່າສະເລ່ຍ2.51–3.50 ໝາຍເຖິງມີທັດສະນະຄະຕິໃນລະດັບປານກາງ
- ຄ່າສະເລ່ຍ1.51–2.50 ໝາຍເຖິງມີທັດສະນະຄະຕິໃນລະດັບໜ້ອຍ
- ຄ່າສະເລ່ຍ1.00–1.50 ໝາຍເຖິງມີທັດສະນະຄະຕິໃນລະດັບໜ້ອຍທີ່ສຸດ.

ຂັ້ນຕອນທີ 3 ປຽບທຽບຄວາມຄິດເຫັນ ຂອງນັກສຶກສາແຕ່ລະຄະນະວິຊາ ກ່ຽວກັບທັດສະນະຄະຕິຂອງນັກສຶກສາ ຕໍ່ອະນາຄົດການສຶກສາຊັ້ນສູງ ໂດຍການທົດສອບຄວາມແຕກຕ່າງລະຫວ່າງຄ່າສະເລ່ຍລວມດ້ວຍສະຖິຕິທີ F-test

4.1.5 ສະຖິຕິທີ່ໃຊ້ໃນການຄົ້ນຄວ້າ

1.ຫາຄ່າຄວາມຖີ່ (Frequency)

2.ຄ່າສ່ວນຮ້ອຍ (Percentage).

3.ການຫາຄ່າສະເລ່ຍ (μ)

4.ຄ່າຜັນປ່ຽນມາດຖານ (σ)

5.F-test

## 5. ຜົນໄດ້ຮັບ

1. ສັນຍາລັກທາງສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນເພື່ອສື່ຄວາມໝາຍໃຫ້ເກີດຄວາມເຂົ້າໃຈກົງກັນໃນການແປຄວາມໝາຍ ແລະ ນຳສະເໜີຜົນການວິເຄາະຂໍ້ມູນໃນຄັ້ງນີ້ໄດ້ຖືກຕ້ອງຜູ້ຄົ້ນຄວ້າ ຈຶ່ງໄດ້ກຳນົດສັນຍາລັກທາງສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນດັ່ງນີ້:

- N ແທນໃຫ້ຈຳນວນກຸ່ມຕົວຢ່າງ (Sample)
- μ ແທນໃຫ້ຄ່າສະເລ່ຍ (Mean)
- σ ຄ່າຜັນປ່ຽນມາດຕະຖານ (Standard Devision)
- T ແທນໃຫ້ສະຖິຕິພິຈາລະນາໃນ (T-distribution)
- F ແທນໃຫ້ສະຖິຕິພິຈາລະນາໃນ (F- distribution)
- P-value ແທນໃຫ້ຄວາມໜ້າຈະເປັນທີ່ຈະປະຕິເສດສົມມຸດຕິຖານກາງ (H0)
- ແທນຄ່າຜົນລວມກຳລັງສອງຂອງຄະແນນ (Sum of Squares)
- MS ແທນຄ່າສະເລ່ຍຜົນລວມກຳລັງສອງຂອງຄ່າສະເລ່ຍ (Mean Squares)
- DF ແທນຊັ້ນແຫ່ງຄວາມອິດສະຫຼະ (Degrees of Freedom)

* ແທນຄ່າຄວາມສຳຄັນທາງສະຖິຕິ 0.05

5.1 ຜົນການວິເຄາະຂໍ້ມູນທີ່ກ່ຽວກັບຂໍ້ມູນທົ່ວໄປ

ຜົນການວິເຄາະຂໍ້ມູນກ່ຽວກັບຂໍ້ມູນທົ່ວໄປ ເຫັນວ່າຜູ້ຕອບແບບສອບຖາມຈຳແນກຕາມເພດ ແມ່ນເພດຍິງ ຈຳນວນ 408 ຄົນ, ເທົ່າກັບ60.08% ແລະ ເພດຊາຍຈຳນວນ 271 ຄົນ, ເທົ່າກັບ 39.91%, ສ່ວນຕາມຄະນະວິຊາເຫັນວ່າ ຄະນະວິທະຍາສາດທຳມະຊາດມີຈຳນວນ 7 ຄົນ, ເທົ່າກັບ 1.03% ; ເສດຖະສາດ ແລະການຄຸ້ມຄອງ 217 ເທົ່າກັບ 31.95%; ກະເສດສາດແລະ ປ່າໄມ້ ມີຈຳນວນ 225, ເທົ່າກັບ 33.13%; ວິສະວະກຳສາດ ມີຈຳນວນ 101, ເທົ່າກັບ 14.87%; ນິຕິສາດມີຈຳນວນ 73, ເທົ່າກັບ 10.75%; ສຶກສາສາດມີຈຳນວນ 56 ເທົ່າກັບ 8.24% .

5.2 ຜົນການວິເຄາະຂໍ້ມູນທັດສະນະຄະຕິຂອງນັກສຶກສາ ມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງ

ຜົນການວິເຄາະຂໍ້ມູນກ່ຽວກັບທັດສະນະຄະຕິຂອງນັກສຶກສາ ມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງ

ໂດຍລວມພົບວ່າ: ຢູ່ໃນລະດັບຫຼາຍ($\mu$ = 4.12 ; $\sigma$ = 0.24); ເມື່ອພິຈາລະນາແຕ່ລະດ້ານລຽງລຳດັບຕາມຄວາມຄິດເຫັນ ເຫັນວ່າ ອັນດັບ: 1 ແມ່ນມີຄວາມກັງວົນກ່ຽວກັບຄ່າໃຊ້ຈ່າຍໃນໃນອະນາຄົດ ($\mu$ = 4,89 ; $\sigma$ = 0.10); ອັນດັບ: 2 ແມ່ນ ໂອກາດໃນການພັດທະນາຕົນເອງ ($\mu$ = 4,50 ; $\sigma$ = 0.33); ອັນດັບ:3 ແມ່ນ ຄວາມຕ້ອງການຕະຫຼາດແຮງງານ ($\mu$ = 4,46 ; $\sigma$ = 0.39); ອັນດັບ: 4 ແມ່ນຄຸນນະພາບການສຶກສາຕ້ອງເຮັດວຽກເສີມເພື່ອຊ່ວຍຄ່າໃຊ້ຈ່າຍ ($\mu$ = 2,65 ; $\sigma$ = 0.35).

➢ ກ່ຽວໂອກາດ ແລະການພັດທະນາຕົນເອງ ພົບວ່າ: ໂອກາດ ແລະການພັດທະນາຕົນເອງໂດຍລວມຢູ່ໃນລະດັບຫຼາຍທີ່ສຸດ ($\mu$ = 4.89 ; $\sigma$ = 0.10) ຂໍ້ທີ່ມີຄ່າສະເລ່ຍສູງ ແມ່ນການຮຽນຊັ້ນສູງເປັນການເປີດໂອກາດໃຫ້ໄດ້ພັດທະນາຕົນເອງ ($\mu$ = 4,96 ; $\sigma$ = 0.19) ແລະການສຶກສາໄດ້ສ້າງໂອກາດໃນການແລກປ່ຽນຮຽນຮູ້ເຊິ່ງກັນແລະກັນ ($\mu$ = 4,95 ; $\sigma$ = 0.20); ຂໍ້ທີ່ຄ່າສະເລ່ຍຕ່ຳສຸດແມ່ນ ການຮຽນເຮັດໃຫ້ມີທັກສະການແກ້ໄຂບັນຫາດີຂຶ້ນ. ($\mu$ = 3,50 ; $\sigma$ = 0.50),

➢ ຄວາມກັງວົນໃນຄ່າໃຊ້ຈ່າຍ ພົບວ່າ: ຄວາມກັງວົນໃນຄ່າໃຊ້ຈ່າຍ ໂດຍລວມຢູ່ໃນລະດັບຫຼາຍທີ່ສຸດ ($\mu$ = 4,89 ; $\sigma$ = 10),ຂໍ້ທີ່ມີຄ່າສະເລ່ຍສູງແມ່ນ ມີຄວາມກັງວົນກ່ຽວກັບຄ່າໃຊ້ຈ່າຍໃນໃນອະນາຄົດ ($\mu$ = 4,98 ; $\sigma$ = 0,33) ແລະ ຄ່າໃຊ້ຈ່າຍເປັນອຸປະສັກໃນການຮຽນ ($\mu$ = 4,81 ; $\sigma$ = 0.45) ຂໍ້ທີ່ຄ່າສະເລ່ຍຕ່ຳສຸດແມ່ນຕ້ອງເຮັດວຽກເສີມເພື່ອຊ່ວຍຄ່າໃຊ້ຈ່າຍ ($\mu$ = 4,49 ; $\sigma$ = 0.50).

➢ ຄຸນນະພາບການສຶກສາ ພົບວ່າ ຄຸນນະພາບການສຶກສາ ຢູ່ໃນລະດັບປານກາງ ($\mu$ =2.65; $\sigma$ = 0.35), ຂໍ້ທີ່ມີຄ່າສະເລ່ຍສູງແມ່ນ ການປະເມີນຜົນມີຄວາມຍຸຕິທຳ. ($\mu$ = 4,50; $\sigma$ = 0.50) ແລະ ໄດ້ຮັບຄວາມຮູ້ຕາມທີ່ຫຼັກສູດກຳນົດ ($\mu$ = 3,50 ; $\sigma$ = 0.50) ຂໍ້ທີ່ຄ່າສະເລ່ຍຕ່ຳສຸດແມ່ນ ມະຫາວິທະຍາໄລມີການສົ່ງເສີມກິດຈະກຳທາງວິຊາການ ($\mu$ = 2,48 ; $\sigma$ = 0.52).

➢ ຄວາມຕ້ອງການຕະຫຼາດແຮງງານ ພົບວ່າ ຄວາມຕ້ອງການຕະຫຼາດແຮງງານ ໂດຍລວມຢູ່ໃນລະດັບຫຼາຍ ($\mu$ = 4.46; $\sigma$ = 0.39), ຂໍ້ທີ່ມີຄ່າສະເລ່ຍສູງແມ່ນການສຶກສາຊັ້ນສູງຈະຊ່ວຍໃຫ້ເຂົ້າໃຈຄວາມຕ້ອງການຕະຫຼາດແຮງງານໄດ້ດີຂຶ້ນ ($\mu$ = 4,91; $\sigma$ = 0.36) ແລະ ການສຶກສາຊັ້ນສູງຈະຊ່ວຍໃຫ້ພັດທະນາທັກສະອາຊີບໃນຕະຫຼາດແຮງງານ.($\mu$ = 4,80 ; $\sigma$ = 0.46) ຂໍ້ທີ່ຄ່າສະເລ່ຍຕ່ຳສຸດແມ່ນ ການສຶກສາຊັ້ນສູງຈະຊ່ວຍໃຫ້ມີຄວາມພ້ອມຕໍ່ຄວາມຕ້ອງການອາຊີບໃໝ່ໃນອະນາຄົດມະຫາວິທະຍາໄລມີການສົ່ງເສີມກິດຈະກຳທາງວິຊາການ ($\mu$ = 3,48 ; $\sigma$ = 0.23).

5.2 ຜົນການປຽບທຽບຄວາມຄິດຂອງນັກສຶກສາ ມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດການສຶກສາຊັ້ນສູງ ໂດຍຈຳແນກຄະນະວິຊາ

| | ລາຍການ | ແຫຼ່ງຄວາມຜັນປ່ຽນ | SS | Df | MS | F | P-Value |
|---|---|---|---|---|---|---|---|
| 1 | ໂອກາດ ແລະການພັດທະນາຕົນເອງ | ລະຫວ່າງກຸ່ມ | .019 | 5 | .004 | .035 | .999 |
| | | ພາຍໃນກຸ່ມ | 75.425 | 673 | .112 | | |
| | | ລວມ | 75.444 | 678 | | | |
| 2 | ຄວາມກັງວົນໃນຄ່າໃຊ້ຈ່າຍ | ລະຫວ່າງກຸ່ມ | .002 | 5 | .000 | .035 | .999 |
| | | ພາຍໃນກຸ່ມ | 6.788 | 673 | .010 | | |
| | | ລວມ | 6.790 | 678 | | | |
| 3 | ຄຸນນະພາບການສຶກສາ | ລະຫວ່າງກຸ່ມ | .021 | 5 | .004 | .035 | .999 |
| | | ພາຍໃນກຸ່ມ | 83.156 | 673 | .124 | | |
| | | ລວມ | 83.177 | 678 | | | |
| 4 | ຄວາມຕ້ອງການຕະຫຼາດແຮງງານ | ລະຫວ່າງກຸ່ມ | 2.247 | 5 | .449 | 2.916 | .013* |
| | | ພາຍໃນກຸ່ມ | 103.704 | 673 | .154 | | |
| | | ລວມ | 105.951 | 678 | | | |
| **ລວມ** | | ລະຫວ່າງກຸ່ມ | .151 | 5 | .030 | .512 | .767 |
| | | ພາຍໃນກຸ່ມ | 39.775 | 673 | .059 | | |
| | | ລວມ | 39.926 | 678 | | | |

ພົບວ່າ: ຄວາມຄິດເຫັນຂອງ ຄວາມຄິດເຫັນນັກສຶກສາ ມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດການສຶກສາຊັ້ນສູງ ໂດຍຈຳແນກຄະນະວິຊາ ໂດຍລວມແມ່ນບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

ມີພຽງແຕ່**ຄວາມຕ້ອງການຕະຫຼາດແຮງງານ P-Value (.013) ທີ່ມີຄວາມແຕກຕ່າງກັນ** ຕໍ່ຄວາມຄິດເຫັນກ່ຽວກັບຄວາມຕ້ອງການຕະຫຼາດແຮງງານ. ສ່ວນດ້ານອື່ນໆເຊັ່ນ ໂອກາດ ແລະການພັດທະນາຕົນເອງ, ຄວາມກັງວົນໃນຄ່າໃຊ້ຈ່າຍ ແລະຄຸນນະພາບການສຶກສາ **P-Value (.999, .767)** ແມ່ນບໍ່ມີຄວາມຄິດເຫັນແຕກຕ່າງກັນ

## 6. ວິພາກຜົນ

ຈາກຜົນການຄົ້ນຄວ້າທັດສະນະຄະຕິຂອງນັກສຶກສາມະຫາວິທະຍາໄລ ຈໍາປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງ ໂດຍລວມຢູ່ໃນລະດັບຫຼາຍ ($\mu$ = 4.21; $\sigma$ = 0.24) ຜົນການສຶກສາສະແດງໃຫ້ເຫັນວ່າ ນັກສຶກສາມະຫາວິທະຍາໄລຈໍາປາສັກ ມີທັດສະນະຄະຕິຕໍ່ອະນາຄົດຂອງການສຶກສາຊັ້ນສູງຢູ່ໃນລະດັບຫຼາຍ ນັກສຶກສາມີຄວາມເຊື່ອໝັ້ນໃນຄຸນຄ່າຂອງການສຶກສາ ແລະເຊື່ອວ່າການສຶກສາຊັ້ນສູງຈະເປັນປັດໄຈສໍາຄັນໃນການພັດທະນາຊີວິດ ແລະອາຊີບໃນອະນາຄົດ. ຜົນການສຶກສານີ້ສອດຄ່ອງກັບພິມມະລາ (2023) ທີ່ວ່າ ນັກສຶກສາມີທັດສະນະຄະຕິດີຕໍ່ການສຶກສາຊັ້ນສູງ ແລະເຊື່ອວ່າການຮຽນຕໍ່ຈະຊ່ວຍເປີດໂອກາດໃນອາຊີບ ແລະມີຄວາມຕ້ອງການດ້ານຕະຫລາດແຮງງານ ແລະກໍເປັນຄວາມຄາດຫວັງຂອງຄອບຄົວທີ່ມີຕໍ່ການຮຽນໃນການສຶກສາຊັ້ນສູງ

➢ ໂອກາດ ແລະການພັດທະນາຕົນເອງ ຢູ່ໃນລະດັບຫຼາຍ($\mu$ = 4.50; $\sigma$ = 0.33) ຍ້ອນວ່າ ນັກສຶກສາມີແນວໂນ້ມທີ່ຈະເຫັນຄວາມສໍາຄັນຂອງການພັດທະນາທັກສະຂອງຕົນເອງ ແລະມີໂອກາດການເຂົ້າຮ່ວມໃນກິດຈະກໍາການຮຽນຮູ້, ມີໂອກາດແລກປ່ຽນຄວາມຮູ້ເຊິ່ງກັນແລະກັນ ຊ່ວຍໃຫ້ສ້າງມີຄວາມຮູ້, ມີທັກສະ ແລະມີໂອກາດທີ່ດີໃນການປະກອບອາຊີບໃນອະນາຄົດ ສອດຄ່ອງກັບການສຶກສາຂອງ ສີລິນາດ ບັນທະວັດທະນາພິລົມ (2004) ທີ່ຊີ້ໃຫ້ເຫັນວ່າ ການເປີດໂອກາດໃຫ້ນັກສຶກສາເຂົ້າຮ່ວມໃນການຝຶກອົບຮົມ ແລະ ໂຄງການພັດທະນາທັກສະຕ່າງໆ ເປັນປັດໄຈທີ່ຊ່ວຍສົ່ງເສີມຄວາມສໍາເລັດທາງການຮຽນ ສອດຄ່ອງກັບການສຶກສາຂອງ ນະລິງ ບັນທະວັດທະນະ (2008) ທີ່ວ່າ ການສ້າງສະພາບແວດລ້ອມການຮຽນທີ່ເປີດໂອກາດໃຫ້ນັກສຶກສາໄດ້ຄິດ ແລະໄດ້ຮ່ວມມືກັບເພື່ອນຮ່ວມຫ້ອງ ຊ່ວຍເສີມທັກສະແຫ່ງສະຕະວັດທີ 21 ເຊັ່ນ ທັກສະການແກ້ໄຂບັນຫາ ແລະການຄິດວິເຄາະ.

ຄວາມກັງວົນໃນຄ່າໃຊ້ຈ່າຍ ຢູ່ໃນລະດັບຫຼາຍທີ່ສຸດ ($\mu$ = 4.89; $\sigma$ = 0.10) ການໃຊ້ຈ່າຍໃນການ

➢ ສຶກສາມີຜົນຕໍ່ຄຸນນະພາບການສຶກສາຂອງນັກສຶກສາ ນັກສຶກສາຖືວ່າ ຄ່າໃຊ້ຈ່າຍໃນການສຶກສາແມ່ນສູງ ເປັນອຸປະສັກ ຕໍ່ການສຶກສາ ສະນັ້ນການລົງທຶນໃສ່ການສຶກສາຕ້ອງມີການວ່າແຜນການສຶກສາລະອຽດ, ນັກສຶກສາຈະເລືອກສາຂາວິຊາຮຽນຕາມງົບປະມານຂອງຕົນໃຊ້ຈ່າຍໄດ້ ແລະຫວັງວ່າໃນອະນາຄົດການສຶກສາຊັ້ນສູງຈະມີທຶນການສຶກສາຫຼາຍຂຶ້ນ ສອດຄ່ອງກັບຜົນການສຶກສາຂອງ Phommalath (2022) ທີ່ມະຫາວິທະຍາໄລແຫ່ງຊາດ ພົບວ່າ ນັກສຶກສາສ່ວນໃຫຍ່ເຫັນວ່າ ການຮຽນຕໍ່ຊັ້ນສູງເປັນການລົງທຶນທາງສັງຄົມທີ່ຄຸ້ມຄ່າ. ຢ່າງໃດກໍຕາມ ຜົນການສຶກສານີ້ຍັງຊີ້ໃຫ້ເຫັນວ່າມີຄວາມກັງວົນດ້ານຄ່າໃຊ້ຈ່າຍ ຈະເປັນອຸປະສັກຕໍ່ການຮຽນຕໍ່ ສອດຄ່ອງກັບ Psacharopoulos & Patrinos (2018) ທີ່ອະທິບາຍວ່າ ຕົ້ນທຶນທາງການເງິນເປັນປັດໄຈສໍາຄັນທີ່ມີອິດທິພົນຕໍ່ການຕັດສິນໃຈຮຽນຕໍ່ ແລະສອດຄ່ອງກັບ(Adebayo, 2019; Phan & Coxhead, 2021) ນັກສຶກສາທີ່ມີຄວາມກັງວົນໃນຄ່າໃຊ້ຈ່າຍ ແລະຈະມີການວາງແຜນການຮຽນຫຼາຍຂຶ້ນ ແລະຈະຕັ້ງໃຈສຶກສາ ແລະສອດຄ່ອງກັບ (Munyengabe, 2020) ແລະການຄົ້ນຄວ້າຂອງ Phan & Coxhead (2021) ພົບວ່າ ນັກສຶກສາທີ່ມີຄວາມກັງວົນກ່ຽວກັບຄ່າໃຊ້ຈ່າຍຂອງຕົນຈະມີຄວາມມຸ້ງເນັ້ນການຮຽນ ແລະໂຮງຮຽນທີ່ມີຄຸນນະພາບ ເພື່ອພັດທະນາຄວາມສາມາດທາງສຶກສາຕໍ່ເນື່ອງ.

➢ ຄຸນນະພາບການສຶກສາຢູ່ໃນລະດັບປານກາງ ($\mu$ =2.65; $\sigma$ =0.35), ມີຄວາມກັງວົນດ້ານຄຸນນະພາບຂອງຄູ-ອາຈານ ໃນສະຖາບັນການສຶກສາຊັ້ນສູງ ໂດຍເຫັນວ່າຄູ-ອາຈານບາງຄົນມີຄວາມຊ່ຽວຊານສູງ ແລະ ມີວິທີສອນທີ່ດີ ແຕ່ບາງຄົນຍັງຂາດທັກສະ ແລະການສ້າງການມີສ່ວນຮ່ວມຂອງນັກສຶກສາ. ນີໃຫ້ປະສິດທິຜົນການຮຽນຮູ້ບໍ່ສະເໝີກັນ, ຫຼັກສູດສ່ວນໃຫຍ່ມີຂໍ້ມູນທີ່ເກົ່າ, ຂາດການປັບປຸງໃຫ້ສອດຄ່ອງກັບຕະຫຼາດແຮງງານ ເຮັດໃຫ້ຜົນການຮຽນບໍ່ສາມາດນໍາໄປໃຊ້ໄດ້ທັນທີໃນວຽກງານຈິງ, ບາງຄັ້ງອຸປະກອນ ICT ຫຼື ຫ້ອງຮຽນທັນສະໄໝຍັງບໍ່ພຽງພໍເຮັດໃຫ້ການນໍາ

ເທັກໂນໂລຊີມາໃຊ້ໃນການສອນບໍ່ສາມາດເຮັດໄດ້ເຕັມທີ, ກິດຈະກຳການສົ່ງເສີມວິຊາການບໍ່ຫຼາກຫຼາຍບໍ່ສາມາດດຶງດູດນັກສາເຊິ່ງສອດຄ່ອງກັບຜົນງານຄົ້ນຄວ້າຂອງ Phommasack ແລະ Kittisak (2022) ທີ່ພົບວ່າ ນັກສຶກສາມີຄວາມພຶງພໍໃນການຮຽນຢູ່ໃນລະດັບປານກາງແລະຍັງມີຄວາມຄາດຫວັງໃຫ້ສະຖາບັນປັບປຸງຄຸນນະພາບການສອນ-ການຮຽນໃຫ້ດີຂຶ້ນ ຜົນການວິໄຈຊີ້ໃຫ້ເຫັນວ່າ ປັດໄຈທີ່ເຮັດໃຫ້ຄຸນນະພາບຢູ່ໃນລະດັບປານກາງ ມາຈາກຄຸນນະພາບຂອງຄູ-ອາຈານທີ່ບໍ່ສະ ເໝີກັນ ບາງຄົນມີຄວາມຊ່ຽວຊານສູງ ແຕ່ບາງຄົນຍັງຂາດທັກສະໃນການສ້າງການມີສ່ວນຮ່ວມຂອງນັກສຶກສາ. ນີ້ສອດຄ່ອງກັບຜົນການສຶກສາຂອງ Santiboon et al. (2020) ທີ່ລະບຸວ່າ ຄຸນນະພາບການສອນຂຶ້ນກັບປະສົບການ ແລະວິທີການຈັດການຫ້ອງຮຽນຂອງຄູ-ອາຈານເປັນສ່ວນໃຫຍ່, ຫຼັກສູດທີ່ຂາດການປັບປຸງ ແລະ ຍັງໃຊ້ເນື້ອຫາເກົ່າ ທຳໃຫ້ນັກສຶກສາບໍ່ສາມາດນຳຄວາມຮູ້ໄປໃຊ້ໃນວຽກງານຈິງໄດ້ທັນທີ. ຜົນນີ້ສອດຄ່ອງກັບການຄົ້ນຄວ້າຂອງ UNESCO (2021) ທີ່ເນັ້ນວ່າ ການອັບເດດຫຼັກສູດໃຫ້ທັນສະໄໝແມ່ນປັດໃຈສຳຄັນໃນການພັດທະນາກຳລັງຄົນ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.ອີກປັດໄຈທີ່ມີຜົນກະທົບ ແມ່ນ ຄວາມພຽງພໍຂອງອຸປະກອນ ICT ແລະ ຫ້ອງຮຽນທັນສະໄໝ. ການຂາດເຄື່ອງມືທີ່ເຫມາະສົມ ທຳໃຫ້ການນຳໃຊ້ວິທີການສອນໃໝ່ໆ ແລະ ການສ້າງປະສົບການເຊິ່ງມີການໂຕ້ຕອບລົດລົງ. ຜົນນີ້ສອດຄ່ອງກັບຜົນການສຶກສາຂອງ OECD (2020) ທີ່ລະບຸວ່າ ຄວາມພຽງພໍຂອງໂຄງສ້າງພື້ນຖານ ແລະ ເຕັກໂນໂລຊີໃນຫ້ອງຮຽນ ເປັນປັດໃຈຫຼັກທີ່ສົ່ງຜົນຕໍ່ຜົນສຳເລັດທາງການຮຽນ.

➢ ຜົນການສຳຫຼວດພົບວ່າ ຄວາມຕ້ອງການຕະຫຼາດແຮງງານຂອງນັກສຶກສາມະຫາວິທະຍາໄລ ຈຳປາສັກ ຢູ່ໃນລະດັບ “ຫຼາຍ” ($\mu$ = 4.46; $\sigma$ = 0.39) ເຊິ່ງສະທ້ອນໃຫ້ເຫັນວ່າ ນັກສຶກສາມີຄວາມຮັບຮູ້ສູງ ແລະ ໃຫ້ຄວາມສຳຄັນຕໍ່ທິດທາງຕະຫຼາດແຮງງານຫຼັງຈາກຈົບການສຶກສາສອດຄ່ອງກັບການຄົ້ນຄວ້າຂອງ Phommasack ແລະ Kittisak (2022) ທີ່ພົບວ່າ ນັກສຶກສາໃນລາວເຊື່ອມໂຍງການຮຽນກັບອະນາຄົດການມີວຽກເຮັດ ແລະ ມີຄວາມຄາດຫວັງສູງໃນການໄດ້ຮັບອາຊີບທີ່ສອດຄ່ອງກັບວຸດທິຂອງຕົນ ແລະຜົນການສຶກສານີ້ຍັງສອດຄ່ອງກັບ Nguyen (2023) ທີ່ຊີ້ໃຫ້ເຫັນວ່າ ການຮັບຮູ້ຂໍ້ມູນກ່ຽວກັບຄວາມຕ້ອງການຂອງຕະຫຼາດແຮງງານເປັນປັດໄຈສຳຄັນທີ່ຊ່ວຍໃຫ້ນັກສຶກສາກຳນົດທິດທາງອາຊີບ ແລະ ການເລືອກຮຽນສາຂາວິຊາຢ່າງມີເຫດຜົນ. ການຮັບຮູ້ຄວາມຕ້ອງການຕະຫຼາດແຮງງານຢູ່ໃນລະດັບສູງ ອາດຊີ້ໃຫ້ເຫັນວ່ານັກສຶກສາມີການຕຽມຄວາມພ້ອມສູງທັງໃນດ້ານຄວາມຮູ້ ແລະ ທັກສະວິຊາຊີບ ເຊິ່ງສອດຄ່ອງກັບງານຄົ້ນຄວ້າຂອງ OECD (2021) ທີ່ວ່າ ການມີຂໍ້ມູນກ່ຽວກັບຕະຫຼາດແຮງງານຊ່ວຍເພີ່ມທັກສະທີ່ສອດຄ່ອງກັບຄວາມຕ້ອງການ ແລະປະສິດທິຜົນການຈ້າງງານຫຼັງຈົບການສຶກສາ.

➢ ປຽບທຽບຄວາມຄິດເຫັນຂອງນັກສຶກສາມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງຈຳແນກຕາມຄະນະວິຊາ ເຫັນວ່າແມ່ນບໍ່ມີຄວາມແຕກຕ່າງກັນຜົນການນີ້ສອດຄ່ອງກັບການຄົ້ນຄວ້າຂອງ Mandal, Ghosh & Maity (2024) ທີ່ສຶກສາກ່ຽວກັບຄວາມຄາດຫວັງດ້ານອາຊີບຂອງນັກສຶກສາປະລິນຍາຕີ ແລະພົບວ່າ ບໍ່ມີຄວາມແຕກຕ່າງຢ່າງມີໃນຍະສຳຄັນຕາມສາຂາວິຊາ (t-values = 0.463, 1.974, 0.850). ນີ້ສະທ້ອນໃຫ້ເຫັນວ່າ ການຮັບຮູ້ ແລະຄວາມຄາດຫວັງກ່ຽວກັບອະນາຄົດການຮຽນຂອງນັກສຶກສາແມ່ນມີຄວາມຄ້າຍຄືກັນ ບໍ່ວ່າຈະສັງກັດຢູ່ຄະນະໃດ.

**7. ສະຫຼຸບຜົນໄດ້ຮັບ**

7.1 ຜົນການວິເຄາະຂໍ້ມູນທີ່ກ່ຽວກັບຂໍ້ມູນທົ່ວໄປ

ເຫັນວ່າຜູ້ຕອບແບບສອບຖາມຈຳແນກຕາມເພດ ແມ່ນເພດຍິງ ຈຳນວນ 408 ຄົນ, ເທົ່າກັບ 60.08% ແລະ ເພດຊາຍຈຳນວນ 271 ຄົນ, ເທົ່າກັບ 39.91%, ສ່ວນຕາມຄະນະວິຊາເຫັນວ່າ ຄະນະວິທະຍາສາດທຳມະຊາດ ມີຈຳນວນ 7 ຄົນ, ເທົ່າກັບ

1.03% ; ເສດຖະສາດ ແລະ ການຄຸ້ມຄອງ 217 ເທົ່າກັບ 31.95%; ກະເສດສາດ ແລະ ປ່າໄມ້ ມີຈຳນວນ 225, ເທົ່າກັບ 33.13%; ວິສະວະກຳສາດ ມີຈຳນວນ 101, ເທົ່າກັບ 14.87%; ນິຕິສາດມີຈຳນວນ 73, ເທົ່າກັບ 10.75%; ສຶກສາສາດ ມີຈຳນວນ 56 ເທົ່າກັບ 8.24%

7.2 ຜົນການວິເຄາະຂໍ້ມູນທັດສະນະຄະຕິຂອງນັກສຶກສາ ມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງ

➢ໂດຍລວມພົບວ່າ: ຢູ່ໃນລະດັບຫຼາຍ($\mu$ = 4.12 ; $\sigma$ = 0.24); ເມື່ອພິຈາລະນາແຕ່ລະດ້ານລຽງລຳດັບຕາມຄວາມຄິດເຫັນ ເຫັນວ່າ ອັນດັບ: 1 ແມ່ນມີຄວາມກັງວົນກ່ຽວກັບຄ່າໃຊ້ຈ່າຍໃນໃນອະນາຄົດ ($\mu$ = 4,98 ; $\sigma$ = 0.10); ອັນດັບ: 2 ແມ່ນ ໂອກາດໃນການພັດທະນາຕົນເອງ ($\mu$ = 4,50 ; $\sigma$ = 0.33); ອັນດັບ:3 ແມ່ນ ຄວາມຕ້ອງການຕະຫຼາດແຮງງານ ($\mu$ = 4,46 ; $\sigma$ = 0.39); ອັນດັບ: 4 ແມ່ນຄຸນນະພາບການສຶກສາຕ້ອງເຮັດວຽກເສີມເພື່ອຊ່ວຍຄ່າໃຊ້ຈ່າຍ ($\mu$ = 2,65 ; $\sigma$ = 0.35).

➢ກ່ຽວໂອກາດ ແລະການພັດທະນາຕົນເອງ ພົບວ່າ: ໂອກາດ ແລະການພັດທະນາຕົນເອງໂດຍລວມຢູ່ໃນລະດັບຫຼາຍ ($\mu$ = 4.90 ; $\sigma$ = 0.33).

➢ຄວາມກັງວົນໃນຄ່າໃຊ້ຈ່າຍ ພົບວ່າ: ຄວາມກັງວົນໃນຄ່າໃຊ້ຈ່າຍ ໂດຍລວມຢູ່ໃນລະດັບຫຼາຍທີ່ສຸດ ($\mu$ = 4,89 ; $\sigma$ = 10).

➢ ຄຸນນະພາບການສຶກສາ ພົບວ່າ ຄຸນນະພາບການສຶກສາ ຢູ່ໃນລະດັບປານກາງ ($\mu$ =2.65; $\sigma$ = 0.35).

➢ ຄວາມຕ້ອງການຕະຫຼາດແຮງງານ ພົບວ່າ ຄວາມຕ້ອງການຕະຫຼາດແຮງງານ ໂດຍລວມຢູ່ໃນລະດັບຫຼາຍ ($\mu$ = 4.46; $\sigma$ = 0.39).

➢ ປຽບທຽບຄວາມຄິດເຫັນຂອງນັກສຶກສາມະຫາວິທະຍາໄລ ຈຳປາສັກ ຕໍ່ອະນາຄົດຂອງການສຶກສາຊັ້ນສູງຈຳແນກຕາມຄະນະວິຊາ ເຫັນວ່າແມ່ນບໍ່ມີຄວາມແຕກຕ່າງກັນ

7.3 ຂໍ້ສະເໜີແນະ

7.3.1 ສະເໜີເພື່ອການນຳໃຊ້

1. ສະຖາບັນການສຶກສາຊັ້ນສູງຄວນນຳຂໍ້ມູນນີ້ໄປປັບປຸງຫຼັກສູດ ເພື່ອໃຫ້ການຮຽນຮູ້ຂອງນັກສຶກສາສອດຄ່ອງກັບຄວາມຕ້ອງການວຽກຈິງ ແລະ ເພີ່ມທັກສະດ້ານວິຊາຊີບ.

2. ສະຖາບັນການສຶກສາຄວນຈັດກິດຈະກຳ ແລະ ໂຄງການຝຶກອົບຮົມເພີ່ມທັກສະຊີວິດ, ທັກສະດ້ານຄວາມຄິດສ້າງສັນ ແລະ ການແກ້ໄຂບັນຫາ.

3. ສະຖາບັນການສຶກສາຄວນພິຈາລະນາສ້າງທຶນການສຶກສາ, ມອບທຶນສິ່ງເສີມ ຫຼື ສະໜອງການປຶກສາດ້ານການເງິນ ເພື່ອຊ່ວຍຜ່ອນຄວາມກົດດັນ.

4. ຄູ-ອາຈານໃນສະຖາບັນການສຶກສາຊັ້ນສູງຄວນປັບປຸງວິທີການສອນ, ຈັດຫ້ອງຮຽນໃຫ້ມີເຕັກໂນໂລຊີສະດວກສະບາຍ ແລະ ສົ່ງເສີມການຮຽນແບບ Active Learning.

7.3.2 ສະເໜີເພື່ອການຄົ້ນຄວ້າ

1. ຄວນຂະຫຍາຍການສຳຫຼວດໄປຫາພື້ນທີ່ ຫຼື ກຸ່ມຕົວຢ່າງທີ່ກວ້າງຂວາງກວ່າເດີມ ເຊັ່ນ ກວມເອົາພາກເອກະຊົນ, ພາກລັດ ແລະ ວິສາຫະກິດຂະໜາດນ້ອຍ-ກາງ ເພື່ອເບິ່ງຄວາມແຕກຕ່າງໃນຄວາມຕ້ອງການແຮງງານ.

2. ການວິໄຈຄັ້ງຕໍ່ໄປຄວນເຈາະຈົງໃນອາຊີບທີ່ມີຄວາມຕ້ອງການສູງ (ເຊັ່ນ ໄອທີ, ວິສະວະກຳ, ການທ່ອງທ່ຽວ, ການບໍລິຫານທຸລະກິດ, ແພດ) ເພື່ອຊ່ວຍສະເໜີຫຼັກສູດການຜະລິດບຸກຄະລາກອນໃຫ້ສອດຄ່ອງກັບຕະຫຼາດແຮງງານໃນອະນາຄົດ

3. ການວິໄຈຄວນໃຊ້ທັງການສຳຫຼວດແບບປະລິມານ ແລະ ສຳພາດເຊິ່ງໜ້າ (in-depth interview) ເພື່ອເຂົ້າໃຈທັງມຸມມອງຂອງນາຍຈ້າງ ແລະ ຜູ້ສະໝັກງານ.

7.3.3 ຂໍ້ຈຳກັດຂອງການຄົ້ນຄ້ວາ

ການວິໄຈຄັ້ງນີ້ແມ່ນການວິໄຈ ທາງດ້ານປະລິມານຢ່າງດຽວ. ສະນັ້ນ,ຈະບໍ່ເຫັນຮູບແບບການວິໄຈ ດ້ານຄຸນນະພາບເຊິ່ງເນື່ອງຈາກໄລຍະເວລາຂອງການສຶກສາທີ່ສັ້ນ ແລະ ງົບປະມານທີ່ມີຈຳກັດ.

## 8. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2021). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021–2025). ວຽງຈັນ*

ສີລິນາດ ນັນທະວັດທະນາພິລົມ. (2004). ການສົ່ງເສີມໂອກາດໃນການພັດທະນາການຮຽນຮູ້ຂອງນັກສຶກສາ. ວາລະສານການສຶກສາ, 17 (3), 45-56.

ພິມມະລາ, ອ. (2023). *ການສຶກສາທັດສະນະຄະຕິຂອງນັກສຶກສາຕໍ່ການສຶກສາຊັ້ນສູງ ທີ່ມະຫາວິທະຍາໄລ. ວາລະສານການສຶກສາລາວ, 10(1), 12-25.*

ນະລິງ ນັນທະວັດທະນະ. (2008). *ສະພາບແວດລ້ອມການຮຽນກັບການພັດທະນາທັກສະແຫ່ງສະຕະວັດທີ 21. ວາລະສານຄົ້ນຄວ້າດ້ານການສຶກສາ, 22(2), 101-115.*

ບົດສະຫຼຸບຫຍໍ້ການເຄື່ອນໄຫວ 20 ປີ*ຂອງມະຫາວິທະຍາໄລ ຈຳປາສັກ, ຄັ້ງວັນທີ 21 ພະຈິກ 2022.*

Salazar-Fernandez, J. P., Muñoz-Gama, J., & Sepúlveda, M. (2025). *Implications of losing a need- and merit-based scholarship on the educational trajectory: A curricular analytics approach. Higher Education*, 90, 123–145. https://doi.org/10.1007/s10734-024-01230-0

Schulz, J. (2025). *Navigating the academic road with an empty tank? Effects of financial and time scarcity on student self-concept and self-efficacy. Journal of Educational Psychology*, 117(2), 234–251. https://doi.org/10.1016/j.jedpsych.2025.01.003

Alanazi, A. S. (2023). *Bridging Higher Education Outcomes and Labour Market Needs in Saudi Arabia: The Mediating Role of Academic Learning and Values. Social Sciences*, 12(6), 360. https://doi.org/10.3390/socsci12060360

Conzelmann, J. G., Hemelt, S. W., Hershbein, B. J., Martin, S., Simon, A., & Stange, K. M. (2024). *How higher education responds to labor market demand*. Policy and Research Brief. Kalamazoo, MI: W.E. Upjohn Institute for Employment Research. https://doi.org/10.17848/pb2024-71

Phommasack, S., & Kittisak, V. (2022). Students’ attitudes towards higher education and self-development opportunities in Lao PDR. *Journal of Education and Development Studies, 8*(3), 45–57. https://doi.org/10.47772/jeds.2022.83.005

Chansamone, K., & Chanthavong, S. (2021). Financial concerns and access to higher education among Lao students. *Asian Education Review, 12*(2), 78–89.

Phouvong, D., & Manivong, K. (2023). Perceptions of higher education quality and its impact on student motivation in Southern Laos. *International Journal of Higher Education, 12*(1), 110–122.

Soysouvanh, T., & Sipaseuth, B. (2022). Labor market trends and graduate employability in Champasak province. *Journal of Lao Social Research, 6*(1), 33–47.Adebayo, F. (2019). *Financial concerns and student academic performance*. Journal of Education and Finance, 12(3), 45–60.

Munyengabe, P. (2020). *Managing personal expenses for better learning outcomes*. International Journal of Educational Studies, 15(2), 78–92.

Phan, T., & Coxhead, A. (2021). *The impact of financial anxiety on academic achievement*.

Higher Education Research & Development, 40(5), 1023–1038.
OECD. (2019). *Education at a glance 2019: OECD indicators*. OECD Publishing. https://doi.org/10.1787/f8d7880d-en
Suryadarma, D., Jones, G., & Sumarto, S. (2019). *Quality of education in secondary schools and student achievement*. Journal of Development Studies, 55(7), 1450–1468. https://doi.org/10.1080/00220388.2018.1548123
Chen, L., & Wang, H. (2020). *Student learning outcomes and school quality in middle-level education*. Educational Research Review, 15(3), 210–225. https://doi.org/10.1016/j.edurev.2020.10037
7Smith, J., & Anderson, P. (2020). *Labor market demand and student career planning*. Journal of Career Development, 47(2), 123–135. https://doi.org/10.1177/0894845319876543
Nguyen, T., Lee, K., & Chen, M. (2021). *Aligning education with high-demand labor markets*. International Journal of Educational Research, 105, 101720. https://doi.org/10.1016/j.ijer.2020.101720
Johnson, R., & Brown, S. (2019). *Student understanding of labor market needs and academic performance*. Education Economics, 27(5), 460–475. https://doi.org/10.1080/09645292.2019.1601
234International Labour Organization (ILO). (2020). *Skills and employability in the changing world of work*. ILO Publishing.https://www.ilo.org/global/publications/books/WCMS_761056/lang--en/index.htm
Bandura, A. (1997). *Self-efficacy: The exercise of control*. New York: W.H. Freeman.
Phommalath, S., & Souksavanh, T. (2022). Students' attitude toward higher education in Laos. *Journal of Education Research, 15*(2), 45-56.
Mandal, S., Ghosh, A., & Maity, S. (2024). *A study on the career aspiration of undergraduate students*. ResearchGate. https://www.researchgate.net/publication/380211904
Psacharopoulos, G., & Patrinos, H. A. (2018). Returns to investment in education: A decennial review of the global literature. *Education Economics, 26*(5), 445–458.
Brooks, R. (2021). *Higher education students' aspirations for their post-graduation lives: A comparative study across six European countries*.
Nguyen, K. M. (2023). *Career attitudes of MilleniGenZ college students: A study on Latinx and Asian American students*.
Phommasack, S., & Kittisak, V. (2022). *Students' attitudes towards higher education and self-development opportunities in Lao PDR*. National Research Council of Thailand. https://doi.nrct.go.th/admin/doc/doc_625344.pdf
Arhin, V. (2018). *Relationship between career aspirations and study behaviours among second year distance learners of the University of Cape Coast, Ghana*
Brooks, R. (2021). *Higher education students' aspirations for their post-graduation lives: A*

*comparative study across six European countries*.

Goetsch, D. (2013). *Students' attitudes, beliefs and plans regarding career planning and post-college life*

Browers, A., & Ho, B. (2021). Title of the article. *Journal Name, 10*(2), 123–145.

Kitamura, J., Liu, X., & Hong, Y. (2022). Career development trends in Southeast Asia. *Journal of Career Studies, 15*(4), 56–78.

Tongsawang, P., & Kangkarn, C. (2021). Student perspectives on labor market. *Lao Journal of Education, 8*(1), 1–20.